ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ລັດວິສາຫະກິດໄຟຟ້າລາວ

ເລກທີ: 3443/ຟຟລ.ຫຟຟລ.
ນະຄອນຫຼວງວຽງຈັນ, ວັນທີ: 18 AUG 2026

# ໜັງສືເຊີນເຂົ້າຮ່ວມປະມູນ

1. ລັດວິສາຫະກິດໄຟຟ້າລາວ ໄດ້ນຳໃຊ້ຮ່ວງເງິນແຜນງົບປະມານ ແລະ ການລົງທຶນປີ 2026 ເພື່ອເຊີນບັນດາ ບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມເຂົ້າຮ່ວມການປະມູນ ກ່ຽວກັບການຈັດຊື້ ໃນການຜະລິດ ອຸປະກອນເຄື່ອງມືຮັບໃຊ້ວຽກງານປະຊາສຳພັນ ປະຈຳປີ 2026 ຂອງພະແນກປະຊາສາພັນ ແລະ ກິດຈະກຳເພື່ອສັງຄົມ; ໄລຍະການສະໜອງ ທັງໝົດແມ່ນ 30 ວັນ.
2. ການປະມູນນີ້ຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ສະບັບເລກທີ: 30/ສພຊ, ລົງວັນທີ: 2 ພະຈິກ 2017 ແລະ ເອກະສານ ຄຳແນະນຳການໃຊ້ກົດ ໝາຍ ສະບັບ ເລກທີ: 0477/ກງ, ລົງວັນທີ: 13 ກຸມພາ 2019, ຄຳແນະນຳເພີ່ມເຕີມສຳລັບ ມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ: 1995/ກງ, ລົງວັນທີ: 24 ມິຖຸນາ 2019.
3. ຜູ້ປະມູນຕ້ອງມີສຳເນົາເອກະສານໃບອະນຸຍາດດຳເນີນທຸລະກິດ ແລະ ໃບມອບພັນທະອາກອນປີ 2024-2025 ທີ່ຖືກຕ້ອງຕາມກົດໝາຍ.
4. ບໍລິສັດໃດທີ່ມີເງື່ອນໄຂເໝາະສົມ ແລະ ມີຄວາມສົນໃຈ ສາມາດເຮັດໜັງສືສະເໜີ ເພື່ອຊື້ຊອງປະມູນ ແລະ ຮັບເອກະສານປະມູນໄດ້ທີ່ລັດວິສາຫະກິດໄຟຟ້າລາວ (ສຳນັກງານໃຫຍ່), ຖະໜົນມິດຕະພາບລາວ-ໄທ, ຕູ້ ປ.ນ 309, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ. ໂທ: (856-21) 316133-1117, ພະແນກຈັດຊື້-ຈັດຈ້າງ ໃນໂມງລັດຖະການ, ເລີ່ມແຕ່ວັນທີ: 10/9/2026 ໄປຈົນເຖິງ 15/10/2026 ໃນລາຄາ 200,000 ກີບ/ຊອງ ຈຳນວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ (ວິທີການຊຳລະຕ້ອງຈ່າຍເປັນເງິນສົດ).
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:30 ໂມງ ຂອງວັນທີ: 15/10/2026 ທີ່ຫ້ອງປະຊຸມຊັ້ນ 08 ຫ້ອງ 802, ສຳນັກງານໃຫຍ່. ຊອງປະມູນໃດສົ່ງຊ້າກວ່າເວລາທີ່ໄດ້ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 09:30 ໂມງ ຂອງວັນດຽວກັນ ໂດຍຊ້ອງໜ້າຄະນະກຳມະການຈັດຊື້ ຟຟລ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນ.
6. ຜູ້ປະມູນຕ້ອງໄດ້ສະໜອງຫນັງສືຄ້ຳປະກັນຊອງປະມູນໃນມູນຄ່າ 2% ຂອງລາຄາທີ່ສະເໜີຮ່ວມການປະມູນ (ເປັນໜັງສືຄ້ຳປະກັນຈາກທະນາຄານ ຫຼື ເປັນແຊັກວິຊ່າ ເທົ່ານັ້ນທີ່ນຳໃຊ້ຈົນເຖິງວັນທີ 15/1/2027).

**ຜູ້ອຳນວຍການໃຫຍ່**

ອຸດສາຫະກຳ ແລະ ການຄ້າ
ບໍລິສັດລັດ
ວິສາຫະກິດໄຟຟ້າລາວ
ELECTRICITE DU LAOS
ນະຄອນຫຼວງວຽງຈັນ

**ປອ ທອງສະຫວັນ ແກ້ວຄູນຍິ່ງ**
**ຮອງຜູ້ອຳນວຍການ**